ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBILC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່ ເລກທີ : 3980 /ທຄຕລ: 2023.

ນະຄອນຫລວງວຽງຈັນ, ວັນທີ: 17/10/2023.

# ໜັງສືແຈ້ງເຊີນ

**ເຖິງ:** ເຈົ້າຂອງໂຮງງານຕັດຫຍິບ, ຜູ້ປະກອບການທຸລະກິດກ່ຽວກັບການຜະລິດເສື້ອຜ້າ, ປັກແສ່ວ, ຕັດຫຍິບ ແລະ ພິມລາຍ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ຜະລິດເສື້ອ ໂປໂລ ( ສີແດງ ແລະ ຂາວ ) ທຄຕລ ຈຳນວນ 4.500 ຜືນ ແລະ ເສື້ອຍືດຄໍມົນ ສີຂາວ ທຄຕລ ຈຳນວນ 5.000 ຜືນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ຜະລິດເສື້ອ ໂປໂລ( ສີແດງ ແລະ ຂາວ ) ທຄຕລ ຈຳນວນ 4.500 ຜືນ ແລະ ເສື້ອຍືດຄໍມົນ ສີຂາວ ທຄຕລ ຈຳນວນ 5.000 ຜືນ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

**ຮູບແບບເສື້ອ ໂປໂລ ຍິງ-ຊາຍ ລວມ 4.500 ຜືນ ( ສີແດງ ແລະ ຂາວ )**




**ໝາຍຫດ : Size ອາຊີ : ຍິງ 2.300 ຜືນ ແລະ ຊາຍ 2.200 ຜືນ**

**ຮູບແບບເສື້ອຍືດຄໍມົນ ສີຂາວ ຈໍານວນ 5.000 ຜືນ**




**ໝາຍເຫດ : Size ອາຊີ ຂະໜາດ S - XL**

**ໝາຍເຫດ:** ເນື້ອຜ້າ( ທັງເສື້ອໂປໂລ ແລະ ເສື້ອຍືດຄໍມົນ ) ແມ່ນ 87% Nylon 13% Spandex, ພ້ອມປັກແສ່ວ 35 years BCEL 02 ຈຸດຕາມ Artwork, ຜະລິດຕາມ Spec ຜ້າທີ່ ທຄຕລ ກໍານົດ, ສາມາດເຂົ້າມາຮັບຕົວຢ່າງເນື້ອຜ້າໄດ້ທີ່ ທຄຕລ ສໍານັກງານໃຫຍ່, ພະແນກຫ້ອງບໍລິຫານ-ການເງິນ ຊັ້ນ 04 ອາຄານ C (ໃນໂມງລັດຖະການ ).

1. **ເງື່ອນໄຂຂອງບໍລິສັດ ,ຫ້າງຮ້ານຜູ້ສະໜອງທີ່ຈະຍື່ນຊອງປະມູນຕ້ອງປະກອບມີລາຍການດັ່ງນີ້:**

**ເອກະສານຊອງທີ 1 (ບໍ່ປິດຊອງ):**

- ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດ ຜະລິດ ແລະ ຈັດຈໍາໜ່າຍ ເສື້ອຜ້າ ແລະ ມີປະສົບການດ້ານທຸລະກິດດັ່ງກ່າວ ຢ່າງໜ້ອຍ 02 ປີ ຂຶ້ນໄປ: ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2022.
- ລະບຸຄຸນສົມບັດຂອງແພເສື້ອຢ່າງລະອຽດ, ກໍານົດເວລາສົ່ງເຄື່ອງ, ເງື່ອນໄຂການຮັບປະກັນສິນຄ້າຂອງຕົນ ແລະ ເງື່ອນໄຂອື່ນໆໃຫ້ລະບຸລະອຽດ (ຖ້າມີ) ຕາມຮ່າງເອກະສານຄັດຕິດມາພ້ອມນັ້ນ ພ້ອມທັງ ເອົາຜ້າທີ່ຈະຜະລິດຕົວຈິງ ຫຼື ຜະລິດເສື້ອຕາມແບບຂ້າງເທິງມາພ້ອມ.
- ກໍານົດຍື່ນລາຍລະອຽດຂ້າງເທິງນັບຈາກວັນນີ້ຈົນເຖິງ ວັນສຸກ ວັນທີ 27/10/2023 ກ່ອນເວລາ 11.00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 04 ອາຄານ C ຫຼື ສົ່ງຜ່ານຊ່ອງທາງ E-mail: procurement@bcel.com.la (ສໍາລັບການປະກອບເອກະສານ).

**ເອກະສານຊອງທີ 2 (ປິດຊອງ):**

- ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມ ເປີດຊອງຊ້ອງໜ້າຄະນະກຳມະການ ໃນ ວັນສຸກ, ທີ 03/11/2023 ເວລາ 09:00 ໂມງ ທີ່ສຳນັກງານໃຫຍ່ຫ້ອງປະຊຸມ ຊັ້ນ 05, ອາຄານ C.
- ການສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 07%, ໃບສະເໜີລາຄາຂອງຜູ້ສະໜອງມີອາຍຸຢ່າງໜ້ອຍ 01 ເດືອນ ຫຼັງຈາກມື້ຍື່ນຊອງປະມູນ.
- ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຢ່າງໜ້ອຍ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ ຫຼື ແຊັກທີ່ວີຊ້າແລ້ວ ( ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 08/12/2023 ) ທຄຕລ ບໍ່ຮັບເງິນສົດ, ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

**ໝາຍເຫດ:**

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ , ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
2. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ.
3. ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດເສື້ອ ຕົວຈິງ 01 ຊຸດ ມາຜ່ານຕາມ Artwork ທີ່ ທຄຕລ ກຳນົດ ພາຍໃນ 14 ວັນ ນັບຈາກມື້ຮອງຮັບແຈ້ງຊະນະການປະມູນ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອານວຍການ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ນ. ສາຍສະໝອນ ຈັນທະຈັກ

ຕິດຕໍ່ພົວພັນ:

ຂະແໜງສະໜອງວັດຖຸເຕັກນິກ

021 213200 ຕໍ່ 414

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………../ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (POLO ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ……………………

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: